# ການປູກຜັກຫອມປ້ອມ

# (ການໄລ່ລຽງເສດຖະກິດສຳລັບຊາວກະສິກອນ)



**ກໍລະກົດ 2025**

# ສາລະບານ

I. ລັກສະນະທົ່ວໄປຂອງຜັກຫອມປ້ອມ ........ 5
II. ການປູກຜັກຫອມປ້ອມ ........ 5
III. ອຸປະກອນຕ່າງໆ ທີ່ໃຊ້ໃນການປູກຜັກຫອມປ້ອມ ........ 6
IV. ໂຄງປະກອບພື້ນຖານຕົ້ນທຶນການປູກຜັກຫອມປ້ອມ ........ 7
4.1. ທຶນຄົງທີ່ ........ 7
4.2. ທຶນໝູນວຽນ ........ 8
V. ການຄິດໄລ່ຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບ ........ 9
VI. ການຄິດໄລ່ມູນຄ່າທຶນຄົງທີ່ ແລະ ທຶນໝູນວຽນ ທີ່ນໍາໃຊ້ເຂົ້າໃນການປູກຜັກຫອມປ້ອມ ........ 10
VII. ຮູບພາບປະກອບ ........ 16

# ຕາຕະລາງ

ຕາຕະລາງ 1: ສະພາບລວມການປູກຜັກຫອມປ້ອມ ໃນລະດູແລ້ງ ແລະ ລະດູຝົນ ............................................... 5
ຕາຕະລາງ 2 ອຸປະກອນຕ່າງໆ.................................................................................................................. 7
ຕາຕະລາງ 3: ການໄລ່ລຽງລວມທຶນຄົງທີ່ລະດູແລ້ງ ແລະ ຝົນ(ໃນເຮືອນຮົ່ມ ແລະ ກາງແຈ້ງ) ................................. 8
ຕາຕະລາງ 4: ສົມທຽບຕົ້ນທຶນໝູນວຽນໃນການປູກຜັກຫອມປ້ອມໃນເຮືອນຮົມ ແລະ ກາງແຈ້ງ (ໃນລະດູແລ້ງ ແລະ ລະດູຝົນ) . 9
ຕາຕະລາງ 5: ການໄລ່ລຽງຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບຂອງລະດູແລ້ງໃນເຮືອນຮົ່ມ ............... 9
ຕາຕະລາງ 6: ການໄລ່ລຽງຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບຂອງລະດູແລ້ງໃນກາງແຈ້ງ................. 9
ຕາຕະລາງ 7: ການໄລ່ລຽງຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບຂອງລະດູຝົນໃນເຮືອນຮົ່ມ .............. 10
ຕາຕະລາງ 8: ການໄລ່ລຽງຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບຂອງລະດູຝົນໃນກາງແຈ້ງ ................ 10
ຕາຕະລາງ 9: ການຄິດໄລ່ ທຶນຄົງທີ່ ປູກໃນເຮືອນຮົ່ມ (ລະດູແລ້ງ ເດືອນ ທັນວາ ຫາເດືອນ ເມສາ) ....................... 11
ຕາຕະລາງ 10: ການຄິດໄລ່ ທຶນໝູນວຽນ ປູກໃນເຮືອນຮົ່ມ (ລະດູແລ້ງ ເດືອນ ທັນວາ ຫາເດືອນ ເມສາ) ............... 11
ຕາຕະລາງ 11: ການຄິດໄລ່ ທຶນຄົງທີ່ ປູກກາງແຈ້ງ (ລະດູແລ້ງ ເດືອນ ທັນວາ ຫາເດືອນ ເມສາ) ........................... 12
ຕາຕະລາງ 12: ການຄິດໄລ່ທຶນໝູນວຽນ ປູກກາງແຈ້ງ (ລະດູແລ້ງ ເດືອນ ທັນວາ ຫາເດືອນ ເມສາ)....................... 12
ຕາຕະລາງ 13: ການຄິດໄລ່ທຶນຄົງທີ່ ປູກຜັກຫອມປ້ອມໃນເຮືອນຮົ່ມ (ລະດູຝົນ ເດືອນມິຖຸນາ ຫາເດືອນພະຈິກ) .... 13
ຕາຕະລາງ 14: ການຄິດໄລ່ທຶນໝູນວຽນ ປູກໃນເຮືອນຮົ່ມ (ລະດູຝົນ ເດືອນມິຖຸນາ ຫາເດືອນພະຈິກ) ................. 13
ຕາຕະລາງ 15: ການຄິດໄລ່ທຶນຄົງທີ່ ປູກກາງແຈ້ງ (ລະດູຝົນ ເດືອນມິຖຸນາ ຫາເດືອນພະຈິກ) ............................. 14
ຕາຕະລາງ 16: ການຄິດໄລ່ທຶນໝູນວຽນ ປູກການແຈ້ງ (ລະດູຝົນ ເດືອນມິຖຸນາ ຫາເດືອນພະຈິກ)....................... 14

## ບົດນຳ

ຊາວກະສິກອນທີ່ປູກຜັກຫອມປ້ອມເພື່ອບໍລິໂພກໃນຄົວເຮືອນ ຫຼື ເພື່ອສະໜອງຕະຫຼາດ ສ້າງລາຍຮັບໃຫ້ກັບຕົນ ແລະ ຄອບຄົວ ລ້ວນແຕ່ໄດ້ໃຊ້ ແຮງງານ, ເວລາ, ດິນ, ນ້ຳ, ເຄື່ອງມື ແລະ ປັດໄຈການຜະລິດຕ່າງໆ ທັງໝົດເຫຼົ່ານັ້ນລ້ວນແຕ່ມີມູນຄ່າ ແລະ ເປັນສ່ວນປະກອບຂອງຕົ້ນທຶນໃນການຜະລິດ. ເພາະສະນັ້ນ, ການເກັບກຳຂໍ້ມູນມູນຄ່າການໃຊ້ຈ່າຍຕ່າງໆເປັນຕົ້ນ ຄ່າ ເມັດພັນ, ປຸ໋ຍ, ຢາ, ຄ່າແຮງງານ, ຄ່ານ້ຳ, ຄ່າວັດສະດຸບັນຈຸຫຸ້ມຫໍ່ ແລະ ການຂົນສົ່ງ ໄປຫາຜູ້ບໍລິໂພກ ຫຼື ຕະຫຼາດປາຍທາງຈຶ່ງມີຄວາມຈຳເປັນຕ້ອງມີຂໍ້ມູນໄວ້ຢ່າງຊັດເຈນ ເພື່ອນຳເຂົ້າສູ່ຂະບວນການໄລ່ລຽງເສດຖະກິດ ໃນການຜະລິດ ຊຶ່ງມັນເປັນການຊ່ວຍໃຫ້ຊາວກະສິກອນສາມາດໄລ່ລຽງເສດຖະກິດໄດ້ຄື:

- ຄິດໄລ່ຕົ້ນທຶນ ແລະ ຫົວໜ່ວຍລາຄາ ຂອງຜັກຫອມປ້ອມຕ້ອງຈຳໜ່າຍອອກ ໃຫ້ມີຜົນກຳໄລ;
- ຕັດສິນໃຈໄດ້ວ່າ ຄວນປູກຜັກຫອມປ້ອມໃນປະລິມານເທົ່າໃດ, ຊ່ວງເວລາໃດ ແລະ ໃຊ້ເຕັກນິກຢ່າງໃດຈຶ່ງຈະມີກຳໄລທີ່ສູງສຸດ; ແລະ
- ຫຼີກເວັ້ນ ການເພີ່ມຕົ້ນທຶນຈາກການຈັດການທີ່ບໍ່ຖືກຕ້ອງ.

ການໄລ່ລຽງເສດຖະກິດໃນການປູກຜັກຫອມປ້ອມແມ່ນທັງເຄື່ອງມື ແລະ ຂັ້ນຕອນສຳຄັນ ທີ່ຊ່ວຍໃຫ້ເຫັນຄວາມຄຸ້ມຄ່າຂອງການລົງທຶນ ແລະ ຜົນຕອບແທນ ເພື່ອກຳນົດແຜນການຜະລິດ ແລະ ແຜນທຸລະກິດທີ່ຖືກຕ້ອງ ແລະເຫມາະສົມ. ນອກຈາກນັ້ນ ຍັງຊ່ວຍໃຫ້ຜູ້ຜະລິດມີການເຊື່ອມໂຍງກັບຕະຫຼາດໄດ້ໝັ້ນຄົງ ແລະ ກ້າວສູ່ການແຂ່ງຂັນໃນລະດັບທີ່ສູງຂຶ້ນໄດ້.

## I. ລັກສະນະທົ່ວໄປຂອງຜັກຫອມປ້ອມ

ຜັກຫອມປ້ອມເປັນພືດລົ້ມລຸກ, ອາຍຸສັ້ນ, ມີການເຕີບໂຕໄວ ແລະ ສາມາດປູກໄດ້ໃນດິນເກືອບທຸກປະເພດ. ອາຍຸຕັ້ງແຕ່ປູກເຖິງເກັບກ່ຽວໃຊ້ເວລາປະມານ 40-60 ວັນ. ຫອມປ້ອມຈະເລີນເຕີບໂຕດີ, ໃຫຍ່ໄວ ແມ່ນດິນຊາຍແກມຕົມ, ລະບາຍນໍ້າດີ ແຕ່ຕ້ອງໃຫ້ມີຄວາມຊຸ່ມພຽງພໍ, ດິນຫຼວມ ແລະ ນໍ້າບໍ່ຂັງ. ດັ່ງນັ້ນ, ການປູກຜັກຫອມປ້ອມຕ້ອງໝັ່ນຫົດນໍ້າ, ໃຫ້ຜັກຖືກແດດຕະຫຼອດມື້.

ຜັກຫອມປ້ອມເປັນທີ່ນິຍົມນໍາໃຊ້ເຂົ້າໃນການປຸງແຕ່ງ ອາຫານ ໃນຊີວິດປະຈໍາວັນ ເປັນຜັກທີ່ ນໍາໃຊ້ໄດ້ຫຼາກຫຼາຍເມນູໃນຄົວເຮືອນ ແລະ ຮ້ານອາຫານ ເຊັ່ນ: ໃສ່ຍໍາ, ໃສ່ເຝີ, ເຂົ້າປຽກ, ໝີ່ເຫຼືອງ, ໃສ່ແກງ, ລາບ, ປີ້ນ, ຊຸບ, ເຂົ້າປຸ້ນ, ກິນໂດຍກົງເປັນຜັກກັບ ແລະ ອື່ນໆ ຕາມຄວາມມັກຂອງໃຜລາວ. ຜັກຫອມປ້ອມ ເປັນຜັກທີ່ຕ້ອງການຂອງຕະຫຼາດສູງ ແລະລາຄາກໍ່ດີ. ເນື່ອງຈາກຜັກຫອມປ້ອມ ສາມາດນໍາໃຊ້ເຂົ້າໃນການບໍລິໂພກໄດ້ທຸກສ່ວນ. ສະນັ້ນ, ການເກັບກ່ຽວຄວນລົກດ້ວຍມືໃຫ້ໄດ້ໝົດຕົ້ນລວມໄປເຖິງຮາກຂອງມັນ. ກ່ອນຈະລົກຄວນຫົດນໍ້າໃຫ້ປຽກເສຍກ່ອນ ເພື່ອຈະເຮັດໃຫ້ດິນອ່ອນ ແລະ ສະດວກໃນການລົກ. ຫອມປ້ອມເປັນຜັກທີ່ມີປະໂຫຍດຫຼາຍ ໃຊ້ໄດ້ໝົດທັງຕົ້ນຈົນຮອດຮາກ. ໃບນໍາໄປໃຊ້ປະກອບອາຫານ ສ່ວນຮາກ ແລະ ລໍາຕົ້ນແມ່ນສາມາດນໍາມາຕໍາເພື່ອເປັນເຄື່ອງແກງເນື່ອງຈາກມີກິ່ນຫອມເຮັດໃຫ້ເພີ້ມລົດຊາດຂອງອາຫານໄດ້ດີ.

## II. ການປູກຜັກຫອມປ້ອມ

ຕາຕະລາງ 1: ສະພາບລວມການປູກຜັກຫອມປ້ອມ ໃນລະດູແລ້ງ ແລະ ລະດູຝົນ

| | **ການປູກຜັກຫອມປ້ອມໃນລະດູແລ້ງ** | | **ການປູກຜັກຫອມປ້ອມໃນລະດູຝົນ** | |
|---|---|---|---|---|
| | **ການປູກໃນເຮືອນຮົ່ມ** | **ການປູກກາງແຈ້ງ** | **ການປູກໃນເຮືອນຮົ່ມ** | **ການປູກກາງແຈ້ງ** |
| **ຈຸດດີ** | ຜັກຫອມປ້ອມເປັນຜັກທີ່ສາມາດປູກໄດ້ຕະຫຼາດປີ, ແຕ່ການປູກໃນລະດູແລ້ງແມ່ນເລີ່ມແຕ່ເດືອນພະຈິກ ຫາ ເດືອນ ພຶດສະພາ ,ມີການຈະເລີນເຕີບໂຕໄວ; ຜົນຜະລິດໄດ້ຫຼາຍ ແລະ ຂະຫຍາຍໂຕໄວມີການແຕກກໍຫຼາຍ. ມີສີຂຽວງາມ, ລໍາຕົ້ນແຂງດີ, ປະຫຍັດຝຸ່ນ ການປົວລະບັດຮັກສາງ່າຍ. | ການປູກຜັກຫອມປ້ອມຢູ່ນອກເຮືອນຮົ່ມກໍເປັນອີກທາງເລືອດໜຶ່ງສໍາລັບຊາວກະສິກອນທີ່ບໍ່ມີຕົ້ນທຶນການຜະລິດຫຼາຍ, ສາມາດປູກໃນກາງແຈ້ງ, ເລີ່ມແຕ່ເດືອນພະຈິກ ຫາ ເດືອນ ພຶດສະພາໄດ້ເປັນຊ່ວງອາກາດເຢັນດີ , ມີນໍ້າໝອກ, ໃຊ້ນໍ້າບໍ່ຫຼາຍ. ປູກຜັກໄດ້ມາດ | ການປູກພືດໃນລະດູຝົນແມ່ນເລີ່ມແຕ່ເດືອນ ມິຖຸນາ ຫາ ຕຸລາ, ຄວາມຕ້ອງການຂອງລູກຄ້າຫຼາຍ, ລາຄາສູງ (ແພງຫຼາຍ), ຜົນຜະລິດໄດ້ປານກາງ, ການປົວລະບັດຮັກສາບໍ່ຍາກ, ບໍ່ຄ່ອຍມີພະຍາດ, ໃຊ້ຝຸ່ນບໍ່ຫຼາຍ ແລະໃຊ້ນໍ້າໜ້ອຍ. | ຕົ້ນທຶນການຜະລິດຕໍ່າແລະບໍ່ສ່ຽງຕໍ່ການປ່ຽນ ແປງຂອງສະ ພາບອາກາດ(ບໍ່ຕ້ອງກັງວົນວ່າພະຍຸຈະທໍາລາຍເຮືອນຮົ່ມເພາະບໍ່ໄດ້ປູກໃນເຮືອນຮົ່ມ), ໃຊ້ນໍ້າໜ້ອຍ. |

| | | | | |
|---|---|---|---|---|
| | | ຕະຖານດີ, ຜົນຜະລິດ ໄດ້ຕາມຄາດໝາຍ, ຜັກ ມີການຈະ ເລີນເຕີບໂຕ ໄວ, ແຜ່ຫຼາຍ; ລາຄາ ຕົ້ນທຶນການຜະລິດ ຕ່ຳ ແລະ ສາມາດເກັບແນວ ພັນໄວ້ໄດ້. | | |
| **ຈຸດອ່ອນ** | ຈຸດອ່ອນ ແຕ່ເດືອນ ມັງກອນ ຫາ ເດືອນເມສາ ລາຄາຕ່ຳ ແລະ ບໍ່ມີ ຕະຫລາດຮອງຮັບທີ່ແນ່ ນອນ | ເດືອນມີນາ ຫາ ພຶດສະພາ ອາກາດ ຮ້ອນເຮັດໃຫ້ຜັກຍຸບ ຕາຍ, ລຳຕົ້ນນ້ອຍ ໄດ້ ລາຄາປານກາງ, ຜົນ ຜະລິດຕ່ຳ, ອັດຕາການ ຕາຍ 10-15% ໃຊ້ນ້ຳ ຫຼາຍ ແລະ ການໃຊ້ນ້ຳ ແມ່ນ ເຊົ້າ, ແລງ. | ຕົ້ນທຶນການຜະລິດສູງ, ໃຊ້ ແນວພັນຫຼາຍຂຶ້ນ ປະລິມານຫຼຸດລົງ 10% ລຳ ຕົ້ນບໍ່ໃຫຍ່ (ປານກາງ) ບໍ່ ແຕກກໍຫຼາຍ ປະລິມານຜົນ ຜະລິດຫຼຸດ 30%, ລະດູແລ້ງປູກໄດ້ໜ້ອຍ, ບໍ່ ພຽງພໍກັບຄວາມຕ້ອງການ ຂອງຕະຫຼາດ (ເຮືອນໜ້ ອຍ) ຕົ້ນທຶນສູງ ອັດຕາ ການງອກ ແລະ ແຕກກໍຕ່ຳ | ປູກໄດ້ບາງຄັ້ງຄາວ, ຝົນຫຼາຍມີຄວາມ ສ່ຽງ ເຖິງ 40-50% ພະ ຍາດຮາກເນົ່າ, ຜົນຜະລິດຕ່ຳ, ຜັກຫອມປ້ອມ ແຕ່ ເດືອນ 04-05 ປູກ ຍາກ, ອາກາດຮ້ອນ, ລຳຕົ້ນນ້ອຍ,ນານ ໃຫຍ່, ຜົນຜະ ລິດຕ່ຳ , ລາຄາບໍ່ດີ (ຜັກບໍ່ ງາມ); |
| **ສິ່ງທີ່ຄວນເອົາໃຈໃສ່** | 1. ຜັກຫອມປ້ອມມັກ ລະດູຝົນສ່ຽງຕໍ່ພະຍາດຮາກເນົ່າ.<br>2. ສະພາບອາກາດມີການປ່ຽນແປງ: ພະຍາດ, ແມງໄມ້ສັດຕູພືດ ແລະ ພະຍຸອາດເຂົ້າທຳລາຍ (ເຮືອນຮົ່ມເປ່ເພ).<br>3. ຕ້ອງມີເຟືອງ ຫຼື ແກບປົກທຸກຄັ້ງ.<br>4. ບໍ່ຄວນປູກພືດຊະນິດດຽວຊ້ຳໝານເກົ່າ(ຫຼັງຈາກເກັບຜັກບົ່ວຄວນລົງຜັກຊະນິດອື່ນກ່ອນຈຶ່ງສາມາດລົງຜັກບົ່ວໄດ້ ເພື່ອຫຼີກລ້ຽງການລະບາດຂອງພະຍາດ) | | | |

## III. ອຸປະກອນຕ່າງໆ ທີ່ໃຊ້ໃນການປູກຜັກຫອມປ້ອມ

ລະບົບໄຟຟ້າແມ່ນນຳໃຊ້ສຳລັບປໍ້າດູດນໍ້າ ຫົດຜັກ ໃນພື້ນທີ່ຜະລິດ ລະບົບໄຟຟ້າໃນ 1 ເຮືອນຮົມ ແລະ ມີອາຍຸການນຳໃຊ້ ປະມານ 10 ປີ. ນອກນັ້ນ ມີອຸປະກອນທີ່ສຳຄັນຕ້ອງໃຊ້ເປັນຕົ້ນ ທໍ່ຢາງຫົດນໍ້າ ແລະ ທໍ່ພີວີຊີ ສຳລັບແລ່ນສາຍນໍ້າໃນພື້ນທີ່ຜະລິດ. ອຸປະກອນ 10 ຊະນິດນີ້ແມ່ນໄດ້ນຳໃຊ້ເຂົ້າ ກາຜະລິດຕະຫຼອດ ບໍ່ວ່າຈະເປັນລະດູແລ້ງ ແລະ ລະດູຝົນ.

ຕາຕະລາງ 2 ອຸປະກອນຕ່າງໆ

| ລ/ດ | ລາຍການ | ຫົວໜ່ວຍ | ຈຳນວນ | ການນຳໃຊ້ | ອາຍຸການນຳໃຊ້ (ປີ) |
|---|---|---|---|---|---|
| 1 | ຈົກ | ອັນ | 1 | ໃຊ້ສຳລັບຂຸດໜານຜັກ | 3 |
| 2 | ຊ້ອນ | ອັນ | 1 | ໃຊ້ສຳລັບຂຸດ, ເສາະ, ເສຍຫຍ້າ | 3 |
| 3 | ຄາດ | ອັນ | 1 | ໃຊ້ສຳລັບການປັບ ຫຼື ກວດໜານຜັກ ໃຫ້ພຽງດີ,ສະໝ່ຳສະເໝີ | 3 |
| 4 | ກະຕ່າ | ໜ່ວຍ | 1 | ໃຊ້ສຳລັບໃສ່ຜັກເວລາເກັບກ່ຽວ ແລະ ໃສ່ຜັກໄປຂາຍ ຫຼື ສົ່ງເພື່ອບໍ່ໃຫ້ຜັກມີການເຕັກກັນ ໃຫ້ຜັກຍັງຄົງຢູ່ໃນສະພາບດີ | 5 |
| 5 | ລໍ້ຍູ້ | ຄັນ | 1 | ໃຊ້ສຳລັບ ອຳນວຍຄວາມສະດວກເຊັ່ນເວລາໃສ່ຝຸ່ນ, ບົວລະບັດຮັກສາ, ເກັບກູ້ຜັກ | 5 |
| 6 | ທໍ່ຢາງ | ແມັດ | 15 | ໃຊ້ສຳລັບຕໍ່ຫົດຜັກ | 5 |
| 7 | ທໍ່ພີວີຊີ | ອັນ | 15 | ໃຊ້ສຳລັບແລ່ນສາຍນ້ຳຕາມສວນ | 5 |
| 8 | ບົວຢາງຫົດຜັກ | ອັນ | 1 | ໃຊ້ບັນຈຸນ້ຳໃນການຫົດຜັກໃນສວນ | 3 |
| 9 | ລະບົບໄຟຟ້າ | ຊຸດ | 1 | ໃຊ້ໃດດູດນ້ຳຫົດສວນ | 10 |
| 10 | ເຈາະນ້ຳບາດານ | ບໍ່ | 1 | ໃຊ້ໄວ້ຫົວສວນຜັກ | 10 |
| 11 | ເຮືອນຮົ່ມ (ໂຄງເຫຼັກ) | ຫຼັງ | 1 | ພື້ນທີ່ສຳລັບປູກຜັກ | 10 |

## IV. ໂຄງປະກອບພື້ນຖານຕົ້ນທຶນການປູກຜັກຫອມປ້ອມ

ແມ່ນມູນຄ່າການລົງທຶນທີ່ເກີດຂຶ້ນໃນການປູກຜັກຫອມປ້ອມ ຊຶ່ງປະກອບມີ ທຶນຄົງທີ່, ທຶນໝູນວຽນ ແລະ ຄ່າບໍລິການຕ່າງໆ ທີ່ຄິດໄລ່ເຂົ້າເປັນຕົ້ນທຶນການຜະລິດ ເພື່ອເປັນບ່ອນອີງໃຫ້ແກ່ ການກຳນົດ ແລະ ຕໍ່ລອງລາຄາ. ໂດຍສ່ວນໃຫຍ່ຈະກຳນົດເປັນປີ ມີສອງລະດູການປູກຄື ລະດູແລ້ງ ແລະ ລະດູຝົນ.

### 4.1. ທຶນຄົງທີ່

ແມ່ນມູນຄ່າການລົງທຶນໃສ່ສິ່ງກໍ່ສ້າງຮັບໃຊ້ເຂົ້າໃນການຜະລິດ ເປັນຕົ້ນ ເຮືອນຮົ່ມ, ເຄື່ອງຈັກ, ວັດຖຸອຸປະກອນຕ່າງໆທີ່ມີຫົວໜ່ວຍມູນຄ່າເບື້ອງຕົ້ນ ແລະ ສິ່ງເຫຼົ່ານັ້ນສາມາດນຳໃຊ້ ເກີນກ່ວາ 1 ປີ ແລະ ກໍ່ເກີດການສູນເສຍມູນຄ່າພ້ອມກັບມີການເສື່ອມຄຸນນະພາບ ຈາກການໃຊ້ງານພວກມັນໃນແຕ່ລະປີ ຫຼື ລະດູການ ໂດຍສາມາດຄິດໄລ່ເປັນມູນຄ່າອອກໄດ້ຊຶ່ງເອີ້ນວ່າ: ຄ່າຫຼູ້ຍຫ້ຽນ.

ຕາຕະລາງ 3: ການໄລ່ລຽງລວມທຶນຄົງທີ່ລະດູແລ້ງ ແລະ ຝົນ(ໃນເຮືອນຮົ່ມ ແລະ ກາງແຈ້ງ)

| ລຳດັບ | ລາຍການ | ລະດູແລ້ງ | | ລະດູຝົນ | |
|---|---|---|---|---|---|
| | ທຶນຄົງທີ (ກີບ) | ເຮືອນຮົ່ມ | ກາງແຈ້ງ | ເຮືອນຮົ່ມ | ກາງແຈ້ງ |
| 1 | ເຮືອນຮົ່ມ | 2,300,000 | - | 2,300,000 | - |
| 2 | ເຈາະນ້ຳ | 200,000 | 500,000 | 400,000 | 500,000 |
| 3 | ລະບົບໄຟ | 500,000 | 500,000 | 500,000 | 500,000 |
| 4 | ຈົກ | 500,000 | 16,667 | 500,000 | 16,667 |
| 5 | ຊວ້ານ | 16,667 | 16,667 | 16,667 | 16,667 |
| 6 | ກະຕ່າ | 16,667 | 30,000 | 16,667 | 30,000 |
| 7 | ຄາດ | 30,000 | 16,667 | 30,000 | 16,667 |
| 8 | ລໍ້ຍູ້ | 16,667 | 70,000 | 16,667 | 70,000 |
| 9 | ສາຍຢາງ | 70,000 | 33,000 | 70,000 | 33,000 |
| 10 | ທໍ່ພີວີຊີ | 33,000 | 60,000 | 33,000 | 60,000 |
| 11 | ບົວຫົດນ້ຳ | 16,667 | 16,667 | 16,667 | 16,667 |
| | **ລວມ** | 3,683,000 | 1,243,000 | 3,883,000 | 1,259,667 |

**ໝາຍເຫດ:** ຂະໜາດຂອງເຮືອນຮົ່ມທີ່ນຳໃຊ້ເໝາະສົມສຳລັບກຸ່ມຊາວກະສິກອນ ມີຂະໜາດຄວາມກວ້າງ 7 ແມັດ x ຄວາມຍາວ 20 ແມັດ; ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4 ໜານ ມີ ເນື້ອທີ່ປູກ 160 ຕາແມັດ.

## 4.2. ທຶນໝູນວຽນ

ທຶນໝູນວຽນແມ່ນມູນຄ່າບັນດາປັດໄຈການຜະລິດຕ່າງໆ ແລະ ການບໍລິການທີ່ໄດ້ນຳໃຊ້ ແລ້ວໝົດໄປໃນລະຫວ່າງລະດູການຜະລິດ ນັ້ນໆ ຕົວຢ່າງ: ແນວພັນ, ຝຸ່ນ, ນ້ຳໝັກ, ນ້ຳມັນລົດ, ຄ່າແຮງງານ ແລະ ອື່ນໆ (ໝາຍເຫດ: ຖ້າຫາກລະນີຈະໄລ່ລຽງເສດຖະກິດ 2-3 ປີ ແມ່ນຕ້ອງໄດ້ສ້າງຕາຕາລາງລາຍຈ່າຍສຳລັບທຶນໝູນວຽນເປັນແຕ່ລະປີໄປ).

ຕາຕະລາງ 4: ສົມທຽບຕົ້ນທຶນໝູນວຽນໃນການປູກຜັກຫອມປ້ອມໃນເຮືອນຮົ່ມ ແລະ ກາງແຈ້ງ (ໃນລະດູແລ້ງ ແລະ ລະດູຝົນ)

| ລຳດັບ | ລາຍການ<br>ທຶນໝູນວຽນ | ລະດູແລ້ງ | | ລະດູຝົນ | |
|---|---|---|---|---|---|
| | | ເຮືອນຮົ່ມ | ກາງແຈ້ງ | ເຮືອນຮົ່ມ | ກາງແຈ້ງ |
| 1 | ແນວພັນ | 360,000 | 360,000 | 360,000 | 360,000 |
| 2 | ຄ່າໄຟຟ້າ | 180,000 | 180,000 | 180,000 | 180,000 |
| 3 | ຄ່າກຽມດິນ | 180,000 | 180,000 | 180,000 | 180,000 |
| 4 | ແຮງງານ | 2,700,000 | 2,700,000 | 2,700,000 | 2,700,000 |
| 5 | ຝຸ່ນຊີວະພາບ | 4,320,000 | 4,320,000 | 1,080,000 | 1,080,000 |
| 6 | ກາວ | 20,000 | 20,000 | 180,000 | 180,000 |
| 7 | ຖົງຢາງ | 112,500 | 112,500 | 112,500 | 112,500 |
| 8 | ຕອກມັດຜັກ | 45,000 | 45,000 | 90,000 | 90,000 |
| 9 | ນ້ຳໝັກຊີວະພາບ | 45,000 | 45,000 | 45,000 | 45,000 |
| **ລວມ** | | 7,962,500 | 7,962,500 | 4,927,500 | 4,927,500 |

**ໝາຍເຫດ:** ການຄິດໄລ່ໃນການປູກແມ່ນໄດ້ 6 ຮອບວຽນຕໍ່ປີ ແລະ ການປູກ ກາງແຈ້ງ ບໍ່ໃຊ້ເຮືອນຮົ່ມ ກໍ່ມີຂະໜາດຂອງໜານປູກ ເທົ່າໆ ກັນ ເພື່ອຄິດໄລ່ ສົມທຽບໄດ້ງ່າຍ.

## V. ການຄິດໄລ່ຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບ

ການຄິດໄລ່ຕົ້ນທຶນຕໍ່ໜ່ວຍການຜະລິດແມ່ນມີຄວາມສຳຄັນຫຼາຍ ໃນການລົງທຶນດ້ານທຸລະກິດ ເຊິ່ງສາມາດນຳໃຊ້ເຂົ້າໃນການກຳນົດລາຄາຂາຍຂອງຜູ້ຜະລິດ.

ຕາຕະລາງ 5: ການໄລ່ລຽງຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບຂອງລະດູແລ້ງໃນເຮືອນຮົ່ມ

| ລຳດັບ | ລາຍການ | ລະດູແລ້ງ | | | | | | |
|---|---|---|---|---|---|---|---|---|
| | | ເຮືອນຮົ່ມ | | | | | | |
| | | ທຶນໝູນວຽນ | ທຶນຄົງທີ່ | ລວມຕົ້ນທຶນການຜະລິດ | ຕົ້ນທຶນ/ກິໂລ (ກີບ) | ຈຳນວນຜົນຜະລິດ (ກິໂລ) | ລາຄາຂາຍ (ກີບ)/ກິໂລ | ລວມລາຍຮັບ (ກີບ) |
| 1 | ຫອມປ້ອມ | 2,488,417 | 3,743,000 | 6,231,417 | 8,114 | 768 | 40,000 | 30,720,000 |

ຕາຕະລາງ 6: ການໄລ່ລຽງຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບຂອງລະດູແລ້ງໃນກາງແຈ້ງ

| ລຳດັບ | ລາຍການ | ລະດູແລ້ງ | | | | | | |
|---|---|---|---|---|---|---|---|---|
| | | ກາງແຈ້ງ | | | | | | |
| | | ທຶນໝູນວຽນ | ທຶນຄົງທີ່ | ລວມຕົ້ນທຶນການຜະລິດ | ຕົ້ນທຶນ/ກິໂລ (ກີບ) | ຈຳນວນຜົນຜະລິດ (ກິໂລ) | ລາຄາຂາຍ (ກີບ)/ກິໂລ | ລວມລາຍຮັບ (ກີບ) |
| 1 | ຫອມປ້ອມ | 7,773,000 | 1,243,000 | 9,016,000 | 12,522 | 720 | 25,000 | 18,000,000 |

**ໝາຍເຫດ:** ຕົວຢ່າງການໄລ່ລຽງແມ່ນໃນຊ່ວງການປູກແຕ່ເດືອນພະຈິກ ຫາ ເດືອນ ພຶດສະພາ ຂອງປີ 2025 ແລະ ລາຄາຂາຍແມ່ນລາຄາຂາຍໜ້າສວນ.

ຕາຕະລາງ 7: ການໄລ່ລຽງຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບຂອງລະດູຝົນໃນເຮືອນຮົ່ມ

| ລໍາດັບ | ລາຍການ | ລະດູຝົນ | | | | | | |
|---|---|---|---|---|---|---|---|---|
| | | ເຮືອນຮົ່ມ | | | | | | |
| | | ທຶນໝູນວຽນ | ທຶນຄົງທີ່ | ລວມຕົ້ນທຶນການຜະລິດ | ຕົ້ນທຶນ/ກິໂລ (ກີບ) | ຈໍານວນຜົນຜະລິດ (ກິໂລ) | ລາຄາຂາຍ (ກີບ)/ກິໂລ | ລວມລາຍຮັບ (ກີບ) |
| 1 | ຫອມປ້ອມ | 7,533,000 | 3,743,000 | 11,276,000 | 23,492 | 480 | 80,000 | 38,400,000 |

ຕາຕະລາງ 8: ການໄລ່ລຽງຕົ້ນທຶນການຜະລິດ, ຫົວໜ່ວຍລາຄາ ແລະ ລາຍຮັບຂອງລະດູຝົນໃນກາງແຈ້ງ

| ລໍາດັບ | ລາຍການ | ລະດູຝົນ | | | | | | |
|---|---|---|---|---|---|---|---|---|
| | | ກາງແຈ້ງ | | | | | | |
| | | ທຶນໝູນວຽນ | ທຶນຄົງທີ່ | ລວມຕົ້ນທຶນການຜະລິດ | ຕົ້ນທຶນ/ກິໂລ (ກີບ) | ຈໍານວນຜົນຜະລິດ (ກິໂລ) | ລາຄາຂາຍ (ກີບ)/ກິໂລ | ລວມລາຍຮັບ (ກີບ) |
| 1 | ຫອມປ້ອມ | 7,533,000 | 1,243,000 | 8,776,000 | 24,378 | 360 | 60,000 | 21,600,000 |

**ໝາຍເຫດ:** ຕົວຢ່າງການໄລ່ລຽງໃນຊ່ວງປູກແຕ່ເດືອນມິຖຸນາ ຫາ ເດືອນ ຕຸລາ ຂອງປີ 2025 ແລະ ລາຄາຂາຍແມ່ນລາຄາຂາຍໜ້າສວນ.

## VI. ການຄິດໄລ່ມູນຄ່າທຶນຄົງທີ່ ແລະ ທຶນໝູນວຽນ ທີ່ນໍາໃຊ້ເຂົ້າໃນການປູກຜັກຫອມປ້ອມ

ມູນຄ່າເບື້ອງຕົ້ນຂອງເຮືອນຮົ່ມ ແລະ ອຸປະກອນການເຮັດເຮືອນຮົ່ມ 1 ຫຼັງ (ໂຄງເຫຼັກ) ມີຂະໜາດຄວາມກວ້າງ 7 ແມັດ x ຄວາມຍາວ 20 ແມັດ; ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4 ໜານ ມີເນື້ອທີ່ປູກ 160 ຕາແມັດ ແມ່ນ 36,115,000 ກີບ, ອາຍຸການນໍາໃຊ້ອຸປະກອນ ແລະ ເຮືອນຮົ່ມສະເລ່ຍແຕ່ 3-10 ປີ, ອັດຕາຄ່າຫຼູ້ຍຕໍ່ປີແມ່ນ 3,743,000 ກີບຕໍ່ປີ.

ຕາຕະລາງ 9: ການຄິດໄລ່ ທຶນຄົງທີ່ ປູກໃນເຮືອນຮົ່ມ (ລະດູແລ້ງ ເດືອນ ທັນວາ ຫາເດືອນ ເມສາ)

| ລໍາດັບ | ທຶນຄົງທີ່ | ຫົວໜ່ວຍ | ຈໍານວນ | ລາຄາຕໍ່ ຫົວໜ່ວຍ/ກີບ | ລວມ ລາຄາ/ກີບ | ອາຍຸ ການນໍາ ໃຊ້(ປີ) | ຄ່າຫຼຸ້ຍຫ້ຽນ/ປີ |
|---|---|---|---|---|---|---|---|
| 1 | ໂຄງເຮືອນ ຮົ່ມ | ຫຼັງ | 1 | 23,000,000 | 23,000,000 | 10 | 2,300,000 |
| 2 | ຜ້າຢາງ | ຫຼັງ | 1 | 2,000,000 | 2,000,000 | 10 | 200,000 |
| 3 | ເຈາະນໍ້າ | ບໍ່ | 1 | 5,000,000 | 5,000,000 | 10 | 500,000 |
| 4 | ລະບົບໄຟ | ຊຸດ | 1 | 5,000,000 | 5,000,000 | 10 | 500,000 |
| 5 | ຈົກ | ອັນ | 1 | 50,000 | 50,000 | 3 | 16,667 |
| 6 | ຊ້ວານ | ອັນ | 1 | 50,000 | 50,000 | 3 | 16,667 |
| 7 | ກະຕ່າ | ໜ່ວຍ | 1 | 150,000 | 150,000 | 5 | 30,000 |
| 8 | ຄາດ | ອັນ | 1 | 50,000 | 50,000 | 3 | 16,667 |
| 9 | ລໍ້ຍູ້ | ຄັນ | 1 | 350,000 | 350,000 | 5 | 70,000 |
| 10 | ສາຍຢາງ | ແມັດ | 15 | 11,000 | 165,000 | 5 | 33,000 |
| 11 | ທໍ່ພີວີຊີ | ອັນ | 15 | 20,000 | 300,000 | 5 | 60,000 |
| 12 | ບົວຫົດນໍ້າ | ອັນ | 1 | 50,000 | 50,000 | 3 | 16,667 |
| **ທຶນຄົງທີ່(ຄ່າຫຼຸ້ຍຕໍ່ປີ)** | | | | | 36,165,000 | | 3,759,667 |

**ໝາຍເຫດ:** ຂະໜາດຂອງເຮືອນຮົ່ມທີ່ນໍາໃຊ້ເໝາະສົມສໍາລັບກຸ່ມຊາວກະສິກອນ ມີຂະໜາດຄວາມກວ້າງ 7 ແມັດ x ຄວາມຍາວ 20 ແມັດ; ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4 ໜານ ມີ ເນື້ອທີ່ປູກ 160 ຕາແມັດ.

ຕາຕະລາງ 10: ການຄິດໄລ່ ທຶນໝູນວຽນ ປູກໃນເຮືອນຮົ່ມ (ລະດູແລ້ງ ເດືອນ ທັນວາ ຫາເດືອນ ເມສາ)

| ລໍາດັບ | ທຶນໝູນວຽນ | ຫົວໜ່ວຍ | ຈໍານວນ | ລາຄາຕໍ່ຫົວ ໜ່ວຍ | ລວມລາຄາ | ຈໍານວນຮອບ ຜະລິດ | ລວມລາຍຈ່າຍ ທັງໝົດ |
|---|---|---|---|---|---|---|---|
| 1 | ແນວພັນ | ກິໂລ | 1.20 | 140,000 | 168,000 | 6 | 1,008,000 |
| 2 | ຄ່າໄຟ້າ | ເດືອນ | 1 | 20,000 | 20,000 | 6 | 120,000 |
| 3 | ຄ່າກຽມດິນ | ໜານ | 1 | 20,000 | 20,000 | 6 | 120,000 |
| 4 | ແຮງງານ | ຄົນ | 1 | 800,000 | 800,000 | 6 | 4,800,000 |
| 5 | ຝຸ່ນຊີວະພາບ | ໜານ | 50 | 4,000 | 200,000 | 6 | 1,200,000 |
| 6 | ກາວ | ອັນ | 1 | 20,000 | 20,000 | 6 | 120,000 |
| 7 | ຖົງຢ່າງ | ຊອງ | 0.50 | 25,000 | 12,500 | 6 | 75,000 |
| 8 | ຕອກມັດຜັກ | ມັດ | 2 | 5,000 | 10,000 | 6 | 60,000 |
| 9 | ນໍ້າໝັກຊີວະ ພາບ | ຕຸກ | 1 | 5,000 | 5,000 | 6 | 30,000 |
| **ທຶນໝູນວຽນ** | | | | | | | **7,533,000** |

**ໝາຍເຫດ:** ຂະໜາດຂອງເຮືອນຮົ່ມທີ່ນໍາໃຊ້ເໝາະສົມສໍາລັບກຸ່ມຊາວກະສິກອນ ມີຂະໜາດຄວາມກວ້າງ 7 ແມັດ x ຄວາມຍາວ 20 ແມັດ; ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4 ໜານ ມີ ເນື້ອທີ່ປູກ 160 ຕາແມັດ.

ຕາຕະລາງ 11: ການຄິດໄລ່ ທຶນຄົງທີ່ ປູກກາງແຈ້ງ (ລະດູແລ້ງ ເດືອນ ທັນວາ ຫາເດືອນ ເມສາ)

| ລຳດັບ | ທຶນຄົງທີ່ | ຫົວໜ່ວຍ | ຈຳນວນ | ລາຄາຕໍ່ຫົວໜ່ວຍ (ກີບ) | ລວມລາຄາ (ກີບ) | ອາຍຸການນຳໃຊ້ (ປີ) | ຄ່າຫຼຸ້ຍຫ້ຽນ (ປີ) |
|---|---|---|---|---|---|---|---|
| 1 | ເຈາະນ້ຳ | ບໍ່ | 1 | 5,000,000 | 5,000,000 | 10 | 500,000 |
| 2 | ລະບົບໄຟ | ຊຸດ | 1 | 5,000,000 | 5,000,000 | 10 | 500,000 |
| 3 | ຈົກ | ອັນ | 1 | 50,000 | 50,000 | 3 | 16,667 |
| 4 | ຊ້ວານ | ອັນ | 1 | 50,000 | 50,000 | 3 | 16,667 |
| 5 | ກະຕ່າ | ໜ່ວຍ | 1 | 150,000 | 150,000 | 5 | 30,000 |
| 6 | ຄາດ | ອັນ | 1 | 50,000 | 50,000 | 3 | 16,667 |
| 7 | ລໍ້ຍູ້ | ຄັນ | 1 | 350,000 | 350,000 | 5 | 70,000 |
| 8 | ສາຍຢາງ | ແມັດ | 15 | 11,000 | 165,000 | 5 | 33,000 |
| 9 | ທໍ່ພີວີຊີ | ອັນ | 15 | 20,000 | 300,000 | 5 | 60,000 |
| 10 | ບົວຫົດນ້ຳ | ອັນ | 1 | 50,000 | 50,000 | 3 | 16,667 |
| **ທຶນຄົງທີ່(ຄ່າຫຼຸ້ຍຕໍ່ປີ)** | | | | | 11,115,000 | | 1,259,667 |

**ໝາຍເຫດ:** ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4 ໜານມີເນື້ອທີ່ປູກ 160 ຕາແມັດ.

ຕາຕະລາງ 12: ການຄິດໄລ່ທຶນໝູນວຽນ ປູກກາງແຈ້ງ (ລະດູແລ້ງ ເດືອນ ທັນວາ ຫາເດືອນ ເມສາ)

| ລຳດັບ | ທຶນໝູນວຽນ | ຫົວໜ່ວຍ | ຈຳນວນ | ລາຄາຕໍ່ຫົວໜ່ວຍ | ລວມລາຄາ | ຈຳນວນຮອບຜະລິດ | ລວມລາຍຈ່າຍທັງໝົດ |
|---|---|---|---|---|---|---|---|
| 1 | ແນວພັນ | ກິໂລ | 1.20 | 140,000 | 168,000 | 6 | 1,008,000 |
| 2 | ຄ່າໄຟ້າ | ເດືອນ | 1 | 20,000 | 20,000 | 6 | 120,000 |
| 3 | ຄ່າກຽມດິນ | ໜານ | 1 | 20,000 | 20,000 | 6 | 120,000 |
| 4 | ແຮງງານ | ຄົນ | 1 | 800,000 | 800,000 | 6 | 4,800,000 |
| 5 | ຝຸ່ນຊີວະພາບ | ໜານ | 60 | 4,000 | 240,000 | 6 | 1,440,000 |
| 6 | ກາວ | ອັນ | 1 | 20,000 | 20,000 | 6 | 120,000 |
| 7 | ຖົງຢາງ | ຊີບ | 0.50 | 25,000 | 12,500 | 6 | 75,000 |
| 8 | ຕອກມັດຜັກ | ມັດ | 2 | 5,000 | 10,000 | 6 | 60,000 |
| 9 | ນ້ຳມັນຊີວະພາບ | ຕຸກ | 1 | 5,000 | 5,000 | 6 | 30,000 |
| | ທຶນໝູນວຽນ | | | | | | 7,773,000 |

**ໝາຍເຫດ:** ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4ໜານມີ ເນື້ອທີ່ປູກ 160 ຕາແມັດ.

ຕາຕະລາງ 13: ການຄິດໄລ່ທຶນຄົງທີ່ ປູກຜັກຫອມປ້ອມໃນເຮືອນຮົ່ມ (ລະດູຝົນ ເດືອນມິຖຸນາ ຫາເດືອນພະຈິກ)

| ລຳດັບ | ທຶນຄົງທີ່ | ຫົວໜ່ວຍ | ຈຳນວນ | ລາຄາຕໍ່ຫົວໜ່ວຍ | ລວມລາຄາ | ອາຍຸການນຳໃຊ້ | ຄ່າຫຼຸ້ຍຫ້ຽນ/ປີ |
|---|---|---|---|---|---|---|---|
| 1 | ເຮືອນຮົ່ມ | ຫຼັງ | 1 | 25,000,000 | 25,000,000 | 10 | 2,500,000 |
| 2 | ເຈາະນ້ຳ | ບໍ່ | 1 | 5,000,000 | 5,000,000 | 10 | 500,000 |
| 3 | ລະບົບໄຟ | ຊຸດ | 1 | 5,000,000 | 5,000,000 | 10 | 500,000 |
| 4 | ຈົກ | ອັນ | 1 | 50,000 | 50,000 | 3 | 16,667 |
| 5 | ຊ້ວານ | ອັນ | 1 | 50,000 | 50,000 | 3 | 16,667 |
| 6 | ກະຕ່າ | ໜ່ວຍ | 1 | 150,000 | 150,000 | 5 | 30,000 |
| 7 | ຄາດ | ອັນ | 1 | 50,000 | 50,000 | 3 | 16,667 |
| 8 | ລໍ້ຍູ້ | ຄັນ | 1 | 350,000 | 350,000 | 5 | 70,000 |
| 9 | ທໍ່ໄວ້ຫົດນ້ຳ | ແມັດ | 15 | 11,000 | 165,000 | 5 | 33,000 |
| 10 | ທໍ່ພີວີຊີ | ອັນ | 15 | 20,000 | 300,000 | 5 | 60,000 |
| 11 | ບົວຫົດນ້ຳ | ອັນ | 1 | 50,000 | 50,000 | 3 | 16,667 |
| **ທຶນຄົງທີ່(ຄ່າຫຼຸ້ຍຕໍ່ປີ)** | | | | | | | 3,759,667 |

**ໝາຍເຫດ:** ຂະໜາດຂອງເຮືອນຮົ່ມທີ່ນຳໃຊ້ເໝາະສົມສຳລັບກຸ່ມຊາວກະສິກອນ ມີຂະໜາດຄວາມກວ້າງ 7 ແມັດ x ຄວາມຍາວ 20 ແມັດ; ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4 ໜານມີເນື້ອທີ່ປູກ 160 ຕາແມັດ.

ຕາຕະລາງ 14: ການຄິດໄລ່ທຶນໝູນວຽນ ປູກໃນເຮືອນຮົ່ມ (ລະດູຝົນ ເດືອນມິຖຸນາ ຫາເດືອນພະຈິກ)

| ລຳດັບ | ທຶນໝູນວຽນ | ຫົວໜ່ວຍ | ຈຳນວນ | ລາຄາຕໍ່ຫົວໜ່ວຍ | ລວມລາຄາ | ຈຳນວນຮອບຜະລິດ | ລວມລາຍຈ່າຍທັງໝົດ |
|---|---|---|---|---|---|---|---|
| 1 | ແນວພັນ | ກິໂລ | 1.20 | 140,000 | 168,000 | 6 | 1,008,000 |
| 2 | ຄ່າໄຟ້າ | ເດືອນ | 1 | 20,000 | 20,000 | 6 | 120,000 |
| 3 | ຄ່າກຽມດິນ | ໜານ | 1 | 20,000 | 20,000 | 6 | 120,000 |
| 4 | ແຮງງານ | ຄົນ | 1 | 800,000 | 800,000 | 6 | 4,800,000 |
| 5 | ຝຸ່ນຊີວະພາບ | ໜານ | 50 | 4,000 | 200,000 | 6 | 1,200,000 |
| 6 | ກາວ | ອັນ | 1 | 20,000 | 20,000 | 6 | 120,000 |
| 7 | ຖົງຢາງ | ຊອງ | 0.50 | 25,000 | 12,500 | 6 | 75,000 |
| 8 | ຕອກມັດຜັກ | ມັດ | 2 | 5,000 | 10,000 | 6 | 60,000 |

| | | | | | | | |
|---|---|---|---|---|---|---|---|
| 9 | ນ້ຳໝັກຊີວະພາບ | ຕຸກ | 1 | 5,000 | 5,000 | 6 | 30,000 |
| **ທຶນໝູນວຽນ** | | | | | | | **7,533,000** |

**ໝາຍເຫດ:** ຂະໜາດຂອງເຮືອນຮົ່ມທີ່ນຳໃຊ້ເໝາະສົມສຳລັບກຸ່ມຊາວກະສິກອນ ມີຂະໜາດຄວາມກວ້າງ 7 ແມັດ x ຄວາມຍາວ 20 ແມັດ;ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ4 ໜານມີເນື້ອທີ່ປູກ160 ຕາແມັດ.

ຕາຕະລາງ 15: ການຄິດໄລ່ທຶນຄົງທີ່ ປູກກາງແຈ້ງ (ລະດູຝົນ ເດືອນມິຖຸນາ ຫາເດືອນພະຈິກ)

| ລຳດັບ | ທຶນຄົງທີ່ | ຫົວໜ່ວຍ | ຈຳນວນ | ລາຄາຕໍ່ຫົວໜ່ວຍ | ລວມລາຄາ | ອາຍຸການນຳໃຊ້ | ຄ່າຫຼຸ້ຍຫ່ຽນ/ປີ |
|---|---|---|---|---|---|---|---|
| 1 | ເຈາະນ້ຳ | ບໍ່ | 1 | 5,000,000 | 5,000,000 | 10 | 500,000 |
| 2 | ລະບົບໄຟ | ຊຸດ | 1 | 5,000,000 | 5,000,000 | 10 | 500,000 |
| 3 | ຈົກ | ອັນ | 1 | 50,000 | 50,000 | 3 | 16,667 |
| 4 | ຊ້ວານ | ອັນ | 1 | 50,000 | 50,000 | 3 | 16,667 |
| 5 | ກະຕ່າ | ໜ່ວຍ | 1 | 150,000 | 150,000 | 5 | 30,000 |
| 6 | ຄາດ | ອັນ | 1 | 50,000 | 50,000 | 3 | 16,667 |
| 7 | ລໍ້ຍູ້ | ຄັນ | 1 | 350,000 | 350,000 | 5 | 70,000 |
| 8 | ທໍ່ໄວ້ຫົດນ້ຳ | ແມັດ | 15 | 11,000 | 165,000 | 5 | 33,000 |
| 9 | ທໍ່ພີວີຊີ | ອັນ | 15 | 20,000 | 300,000 | 5 | 60,000 |
| 10 | ບົວຫົດນ້ຳ | ອັນ | 1 | 50,000 | 50,000 | 3 | 16,667 |
| **ທຶນຄົງທີ່(ຄ່າຫຼຸ້ຍຕໍ່ປີ)** | | | | | | | 1,259,667 |

**ໝາຍເຫດ:** ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4ໜານມີ ເນື້ອທີ່ປູກ 160 ຕາແມັດ.

ຕາຕະລາງ 16: ການຄິດໄລ່ທຶນໝູນວຽນ ປູກການແຈ້ງ (ລະດູຝົນ ເດືອນມິຖຸນາ ຫາເດືອນພະຈິກ)

| ລຳດັບ | ທຶນໝູນວຽນ | ຫົວໜ່ວຍ | ຈຳນວນ | ລາຄາຕໍ່ຫົວໜ່ວຍ | ລວມລາຄາ | ຈຳນວນຮອບຜະລິດ | ລວມລາຍຈ່າຍທັງໝົດ |
|---|---|---|---|---|---|---|---|
| 1 | ແນວພັນ | ກິໂລ | 1.20 | 140,000 | 168,000 | 6 | 1,008,000 |
| 2 | ຄ່າໄຟ້າ | ເດືອນ | 1 | 20,000 | 20,000 | 6 | 120,000 |
| 3 | ຄ່າກຽມດິນ | ໜານ | 1 | 20,000 | 20,000 | 6 | 120,000 |
| 4 | ແຮງງານ | ຄົນ | 1 | 800,000 | 800,000 | 6 | 4,800,000 |

| | | | | | | | |
|---|---|---|---|---|---|---|---|
| 5 | ຝຸ່ນຊີວະພາບ | ໜານ | 50 | 4,000 | 200,000 | 6 | 1,200,000 |
| 6 | ກາວ | ອັນ | 1 | 20,000 | 20,000 | 6 | 120,000 |
| 7 | ຖົງຢາງ | ຊິບ | 0.50 | 25,000 | 12,500 | 6 | 75,000 |
| 8 | ຕອກມັດຜັກ | ມັດ | 2 | 5,000 | 10,000 | 6 | 60,000 |
| 9 | ນ້ຳໝັກຊີວະພາບ | ຕຸກ | 1 | 5,000 | 5,000 | 6 | 30,000 |
| **ທຶນໝູນວຽນ** | | | | | | | **7,533,000** |

**ໝາຍເຫດ:** ໜານຜັກຂະໜາດ ຄວາມກວ້າງ 1 ແມັດ x ຄວາມຍາວ 20 ແມັດ, ມີ 4 ໜານມີເນື້ອທີ່ປູກ 160 ຕາແມັດ.

## VII. ຮູບພາບປະກອບ

| | | |
|---|---|---|
| ຈົກ<br> | ຊ້ວນ<br> | ຄາດ<br> |
| ກະຕ່າ<br> | ລໍ້<br> | ທໍ່ຢາງ<br> |
| ທໍ່ ພີວີຊີ<br> | ບົວຫົດຜັກ<br> | ຕອກມັດຜັກ<br> |
| ເຮືອນຮົ່ມປູກພືດຜັກ<br> | ການປູກກາງແຈ້ງ<br> | |

**<u>ກວດແກ້ໂດຍ</u>**

1. ທ່ານ ອາຈານ ສົມໄຊ ສີຊານົນ
2. ທ່ານ ພອນວິໄລ ຫຼວງຄຳຫານ, ຮອງຫົວໜ້າກົມສົ່ງເສີມກະສິກຳ ແລະ ສະຫະກອນ

**<u>ທີມງານຂຽນ ແລະ ຮຽບຮຽງ</u>**

1. ທ່ານ ນ. ລຳມອນ ຄຳພົນ, ກົມສົ່ງເສີມກະສິກຳ ແລະ ສະຫະກອນ
2. ທ່ານ ນ. ພອນແກ້ວ ວົງນາ, ສະມາຄົມຊາວກະສິກອນລາວ
3. ທ່ານ ນ. ຄຳມອນ ຫຼວງລາດ, ປະທານສະຫະກອນອິນຊີທົ່ງມັ່ງ
4. ທ່ານ ປອ.ນ. ພອນວິໄລ ສີນະວົງ, ຜູ້ປະສານງານໂຄງການ

**<u>ທີມງານອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນ</u>**

1. ທ່ານ ທິບພະຈັນ ອິນທິລິດ, ຮອງຫົວໜ້າ ພະແນກສົ່ງເສີມເຕັກນິກການຜະລິດ ແລະ ນຳໃຊ້ແນວພັນ
2. ທ່ານ ຄຳເຜີຍ ຈັນທະວົງ, ຮອງຫົວໜ້າ ພະແນກຂໍ້ມູນຂ່າວສາວນການສົ່ງເສີມ ແລະ ເຊື່ອມໂຍງຕະຫຼາດ
3. ທ່ານ ນ. ລິນາ ໄຊຍະຄຳ, ວິຊາການ ພະແນກຂໍ້ມູນຂ່າວສາວນການສົ່ງເສີມ ແລະ ເຊື່ອມໂຍງຕະຫຼາດ
4. ທ່ານ ນ. ແສດມະນີ ພົມພັກດີ, ຮອງຫົວໜ້າສູນຂໍ້ມູນກະສິກຳ ແລະ ປ່າໄມ້, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ